

# ພິທີເຊັນບົດບັນທຶກຄວາມເຂົ້າໃຈການຮ່ວມມືສອງຝ່າຍ (MOU) ລະຫວ່າງ ກົມຄຸ້ມຄອງສະຖາບັນການເງິນ ແລະ ສຳນັກງານປົກປ້ອງເງິນຝາກ




ໃນວັນທີ 07 ມິຖຸນາ 2022 ທີ່ ຫ້ອງປະຊຸມຊັ້ນ IV ທະນາຄານແຫ່ງ ສປປ ລາວ (ທຫລ), ກົມຄຸ້ມຄອງສະຖາບັນການເງິນ (ກຄສງ) ແລະ ສຳນັກງານປົກປ້ອງເງິນຝາກ (ສປງ) ໄດ້ຈັດຕັ້ງພິທີເຊັນບົດບັນທຶກຄວາມເຂົ້າໃຈການຮ່ວມມືສອງຝ່າຍ (MOU) ຮ່ວມກັນ ເພື່ອເປັນການຍົກສູງສາຍພົວພັນຮ່ວມມືຂອງທັງສອງພາກສ່ວນໃຫ້ມີຄວາມໜັກແໜ້ນ ແລະ ແໜ້ນແຟ້ນກວ່າເກົ່າ ໂດຍສະເພາະການແລກປ່ຽນຂໍ້ມູນເຊິ່ງກັນ ແລະ ກັນ ໃຫ້ມີຄວາມຫຼາກຫຼາຍ ແລະ ວ່ອງໄວ ສາມາດນຳໃຊ້ເຂົ້າໃນວຽກງານຄຸ້ມຄອງສະຖາບັນການເງິນ ແລະ ວຽກງານປົກປ້ອງເງິນຝາກ ຢ່າງມີປະສິດທິຜົນ. ລົງນາມໃນ MOU ຄັ້ງນີ້ໂດຍ ທ່ານ ພູຊົງ ຈັນທະຈັກ ຫົວໜ້າ ກຄສງ ແລະ ທ່ານ ນ. ແສງດາວວີ ວົງຄຳຊາວ ຫົວໜ້າ ສປງ. ໃຫ້ກຽດເຂົ້າຮ່ວມເປັນສັກຂີພະຍານ ໂດຍ ທ່ານ ພຸດທະໄຊ ສີວິໄລ ຮອງຜູ້ວ່າການ ທຫລ, ມີຄະນະກົມ, ຄະນະພະແນກ ແລະ ພະນັກງານວິຊາການຂອງທັງສອງພາກສ່ວນໄດ້ເຂົ້າຮ່ວມຢ່າງພ້ອມພຽງ. ໃນພິທີດັ່ງກ່າວ ທ່ານ ໂພທອງ ວົງໄຊ ຮອງຫົວໜ້າ ສປງ ໄດ້ຕາງໜ້າໃຫ້ສອງພາກສ່ວນຂຶ້ນລາຍງານສະພາບການຮ່ວມມື ແລະ ປະສານງານໃນໄລຍະຜ່ານມາ.










ໃນພິທີຄັ້ງນີ້. ຍັງໄດ້ຮັບຟັງຄຳເຫັນໂອ້ລົມຈາກ ທ່ານ ພຸດທະໄຊ ສີວິໄລ ຮອງຜູ້ວ່າການ ທະນາຄານແຫ່ງ ສປປ ລາວ ຊຶ່ງທ່ານໄດ້ສະແດງຄວາມຍ້ອງຍໍ-ຊົມເຊີຍ ຕໍ່ທັງສອງພາກສ່ວນທີ່ສາມາດຈັດຕັ້ງການຮ່ວມມື ຢ່າງມີຜົນສຳເລັດ ໂດຍໄດ້ມີການແລກປ່ຽນຂໍ້ມູນສ່ວນໃດສ່ວນໜຶ່ງ ເຖິງແມ່ນວ່າ ຍັງບໍ່ທັນມີ MOU ກໍຕາມ. ພ້ອມນີ້, ທ່ານຍັງໄດ້ເນັ້ນໃຫ້ທັງສອງພາກສ່ວນຕ້ອງເພີ່ມຄວາມເອົາໃຈໃສ່ ໃນການຮ່ວມມືໃຫ້ນັບມື້ມີຄວາມກົມກຽວ, ສາມາດສະໜອງຂໍ້ມູນເຊິ່ງກັນ ແລະ ກັນ ໄດ້ຢ່າງມີປະສິດທິຜົນ, ຕ້ອງມີການພັດທະນາລະບົບການເກັບກຳຂໍ້ມູນ, ລະບົບການບໍລິຫານໃຫ້ມີຄວາມທັນສະໄໝ, ເອົາໃຈໃສ່ໃນການຈັດຝຶກອົບຮົມ-ແລກປ່ຽນບົດຮຽນ ເຊິ່ງກັນ ແລະ ກັນ ຢ່າງເປັນປົກກະຕິ, ຍົກສູງຄວາມຮັບຜິດຊອບໃນການຮັກສາຄວາມລັບຂອງຂໍ້ມູນທີ່ໄດ້ແລກປ່ຽນ ໃຫ້ມີຄວາມປອດໄພ. ນອກນີ້, ທັງສອງພາກສ່ວນຕ້ອງໄດ້ເອົາໃຈໃສ່ໃນການປຸກລະດົມ-ຊຸກຍູ້ ສກຈຮ ໃຫ້ສາມາດເຄື່ອນໄຫວໄດ້ຢ່າງແຂງແຮງ ແລະ ມີມາດຕະຖານເງື່ອນໄຂຄົບຖ້ວນ ຕາມທີ່ໄດ້ກຳນົດໄວ້ໃນ ດຳລັດວ່າດ້ວຍການປົກປ້ອງເງິນຝາກ ເພື່ອຂະຫຍາຍເຂົ້າເປັນສະມາຊິກຂອງ ສປງ ໃນອານາຄົດ.




ບົດຂ່າວໂດຍ: ແປງຄຳ ເທບສະກົນ;
ພາບໂດຍ: ບຸນນຳ ອິນທະວົງ;

*ຢູ່ເມືອງລາວ ໃຊ້ແຕ່ເງິນກີບ*